

ຝຶກອົບຮົມ "ການລາຍງານຂ່າວບັນຫາສີຂຽວ" ໃຫ້ແກ່ຜູ້ນຳໃຊ້ສື່ອອນລາຍທົ່ວໄປ

ວັນທີ 10-14 ສິງຫາ 2026, ສະມາຄົມນັກຂ່າວລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ມີພິທີເປີດຊຸດຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ ຜູ້ນຳໃຊ້ສື່ອອນລາຍທົ່ວໄປ 40 ຄົນ, ຍິງ 21 ຄົນ ທີ່ນະຄອນຫຼວງວຽງຈັນ. ໂດຍໃຫ້ກຽດຮ່ວມເປັນປະທານຂອງ ທ່ານ ສົມສົກ ສະກຸນຄຳ, ຮອງຫົວໜ້າກົມສື່ມວນຊົນ, ຄະນະໂຄສະນາອົບຮົມສູນກາງພັກ, ທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ທ່ານ ນາງ ບົວຄຳ ດວງປັນຍາ, ຫົວໜ້າໂຄງການ GAMCIL.

ການຝຶກອົບຮົມຄັ້ງນີ້ມີຈຸດປະສົງເພື່ອສ້າງຄວາມອາດສາມາດໃຫ້ແກ່ຜູ້ນຳໃຊ້ສື່ອອນລາຍທົ່ວໄປ ໃນການສ້າງເນື້ອໃນກ່ຽວກັບບັນຫາສີຂຽວຢ່າງມີຄຸນນະພາບ, ການນຳໃຊ້ປັນຍາປະດິດ (AI) ເຂົ້າໃນວຽກງານສື່, ພ້ອມທັງສ້າງຄວາມເຂົ້າໃຈກ່ຽວກັບວຽກງານຄຸ້ມຄອງສື່ມວນຊົນ ແລະ ຍົກໜຶ້ນໃນຈັນຍາບັນນັກຂ່າວເປັນຫຼັກ.

ຕະຫຼອດໄລຍະການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈ, ຄວາມທ້າທາຍ ແລະ ຄຳໝັ້ນສັນຍາໃນການຮຽນຮູ້ ເຊັ່ນ: ການນຳໃຊ້ປັນຍາປະດິດຊ່ວຍໃນການຜະລິດພາບ, ການເຮັດວິດີໂອ, ການນຳໃຊ້ສື່ໃຫ້ຖືກຫຼັກຈັນຍາບັນ ແລະ ໄຮໄລ້ສຳຄັນແມ່ນ ການສ້າງແຜນຜະລິດແຄມເປນທີ່ສື່ເຖິງບັນຫາສິ່ງແວດລ້ອມ, ການແກ້ໄຂບັນຫາ, ການເຊີນຊວນຄົນເຂົ້າຮ່ວມຮັກສາສິ່ງແວດລ້ອມ. ທຸກຄົນໄດ້ຮ່ວມແຮງຮ່ວມໃຈກັນ ນຳສະເໜີຜົນງານສື່ສ້າງສັນ ທີ່ດີທີ່ສຸດ ບໍ່ວ່າຈະເປັນໂປສເຕີ ທີ່ມີເນື້ອຫາເລິກເຊິ່ງ ຫຼື ວິດີໂອ ທີ່ມີຄຸນນະພາບສູງ ເຊິ່ງລ້ວນແຕ່ເກີດຈາກແນວຄິດສ້າງສັນຂອງຜູ້ເຂົ້າຮ່ວມທຸກໆຄົນ.







ການຈັດທັດສະນະສຶກສາໃຫ້ແກ່ນັກຂ່າວ 8 ແຂວງພາກເໜືອ ແລະ ຜູ້ນຳໃຊ້ສື່ອອນລາຍທົ່ວໄປທີ່ນະຄອນຫຼວງພະບາງ

ໃນວັນທີ 18 ກໍລະກົດ 2026, ສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ອົງການ ແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດຕັ້ງການລົງພື້ນທີ່ຢ້ຽມຢາມ ພ້ອມດ້ວຍສື່ມວນຊົນ 36 ທ່ານ ເຊິ່ງລວມມີແມ່ຍິງ 11 ທ່ານ ແລະ ນັກຂ່າວ ພົນລະເມືອງຈາກ 8 ແຂວງພາກເໜືອ ທີ່ເມືອງປາກແຊງ ພາຍໃຕ້ໂຄງການ ສົ່ງເສີມຕາໜ່າງສັດຕະວະແພດ ໃນຮູບແບບທຸລະກິດ ຢູ່ແຂວງ ຫຼວງພະບາງ (ECPPNL). ຜູ້ເຂົ້າຮ່ວມໄດ້ສຳພາດໂດຍກົງກັບຄອບຄົວແບບຢ່າງ, ພະນັກງານສັດຕະວະແພດບ້ານ ແລະ ສະມາຊິກຊຸມຊົນ ເພື່ອປະເມີນຜົນກະທົບ ຂອງໂຄງການ ໃນການສຳຫຼວດການຜະລິດສັດລ້ຽງເພື່ອການຄ້າ, ສ້າງຄວາມ ເຂັ້ມແຂງໃຫ້ແກ່ຄວາມສາມາດຂອງສັດຕະວະແພດຊຸມຊົນ ແລະ ສະໜອງກ້ອນ ເກືອແຮ່ທາດເພື່ອສ້າງພູມຄຸ້ມກັນໃຫ້ແກ່ສັດ.





ຜູ້ເຂົ້າຮ່ວມຍັງໄດ້ໄປຢ້ຽມຢາມສູນຫັດຖະກຳ ອອກພົບຕົກ (Ock Pop Tok), ເຊິ່ງເປັນຮູບແບບທຸລະກິດທີ່ເປັນມິດກັບສິ່ງແວດລ້ອມ ທີ່ສົ່ງເສີມຫັດຖະກຳຕ່ຳ ແຜ່ນຂອງລາວໄປສູ່ທົ່ວໂລກ. ການເດີນທາງຄັ້ງນີ້ ໄດ້ສະແດງໃຫ້ເຫັນເຖິງ 'ພະລັງຂອງການຮ່ວມມືໃນຊຸມຊົນ' ແລະ ໄດ້ຍົກໃຫ້ເຫັນເຖິງການເສີມສ້າງ ຄວາມເຂັ້ມແຂງຂອງແມ່ຍິງ, ເຊິ່ງເປັນການສ້າງໂອກາດໃຫ້ແມ່ຍິງໄດ້ເປັນຜູ້ນຳ ແລະ ຂັບເຄື່ອນການພັດທະນາຊຸມຊົນແບບຍືນຍົງ.





ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ນັກຂ່າວ 8 ແຂວງພາກເໜືອ ທີ່ຫຼວງພະບາງ

ໃນວັນທີ 19-21 ກໍລະກົດ 2026, ສະມາຄົມນັກຂ່າວລາວ ຮ່ວມກັບ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ສືບຕໍ່ຈັດຊຸດ ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ຕາງໜ້າສື່ມວນຊົນຈາກ 8 ແຂວງພາກກາງ ແລະ ຜູ້ນຳໃຊ້ສື່ອອນລາຍທົ່ວໄປ ລວມ ທັງໝົດ 36 ຄົນ, ຍິງ 11 ຄົນ ພາຍໃຕ້ໂຄງການ GAMCIL ທີ່ຫຼວງພະບາງ.

ການຝຶກອົບຮົມໃນຄັ້ງນີ້ ແມ່ນໃຫ້ກຽດເປັນປະທານໂດຍ ທ່ານ ບຸນໄຫຼ ດວງເດືອນ, ຮອງຄະນະໂຄສະນາອົບຮົມແຂວງຫຼວງພະບາງ ແລະ ທ່ານນາງ ບົວຄຳ ດວງປັນຍາ, ຫົວໜ້າໂຄງການ GAMCIL.

ຝຶກອົບຮົມໃນຄັ້ງນີ້ແມ່ນເນັ້ນໃສ່ ຄວາມເຂົ້າໃຈກ່ຽວກັບບົດບາດຍິງ-ຊາຍ ເພື່ອໃຫ້ການນຳສະເໜີຂ່າວມີຄວາມກວມລວມ ແລະ ເທົ່າ ທຽມ, ການສົ່ງເສີມສຽງຂອງທຸກກຸ່ມຄົນໃນສັງຄົມ ແລະ ເພື່ອສ້າງຈິດສຳນຶກ ແລະ ກະຕຸ້ນໃຫ້ສັງຄົມຫັນມາໃສ່ໃຈກັບບັນຫາສີຂຽວ ຢ່າງຍືນຍົງ. ນອກຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ເຮັດກິດຈະກຳສ້າງຄວາມສາມັກຄີ ແລະ ແລກປ່ຽນບົດຮຽນຮ່ວມກັນ ເຊິ່ງບັນຍາກາດ ເຕັມໄປດ້ວຍຄວາມອົບອຸ່ນ, ຄວາມຮ່ວມມື ແລະ ຮອຍຍິ້ມ! ຜ່ານການຮ່ວມມືກັນວາງແຜນ ແລະ ຖອດຖອນບົດຮຽນຜ່ານເກມສ້າງສັນ ເພື່ອມຸ່ງເນັ້ນໃສ່ການຍົກລະດັບຄຸນນະພາບຂອງສື່, ສ້າງຄວາມເຊື່ອຖື ແລະ ການລາຍງານຂ່າວ "ບັນຫາສີຂຽວ" ໃຫ້ເຂົ້າເຖິງສັງຄົມຢ່າງ ມີປະສິດທິພາບ.

ຫຼັງຈາກຈົບຊຸດຝຶກອົບຮົມຄັ້ງນີ້, ຄາດວ່າຕາງໜ້າສື່ມວນຊົນທັງ 8 ແຂວງ ສາມາດຍົກລະດັບຂີດຄວາມສາມາດ ໃນການຜະລິດ ແລະ ນຳສະເໜີຂ່າວສານ ທີ່ບໍ່ພຽງແຕ່ສະທ້ອນເຖິງບັນຫາສິ່ງແວດລ້ອມ (ບັນຫາສີຂຽວ) ເທົ່ານັ້ນ, ແຕ່ຍັງສາມາດສອດແຊກ ມິຕິດ້ານ ບົດບາດຍິງ-ຊາຍ ເຂົ້າໃນເນື້ອຫາຂ່າວ ເພື່ອໃຫ້ສັງຄົມເກີດຄວາມຕື່ນຕົວ, ມີສ່ວນຮ່ວມໃນການປົກປັກຮັກສາທຳມະຊາດຮ່ວມກັນ.









ລັກກີ ຮຸ່ງແສງ: ການຜະສົມຜະສານການຕະຫຼາດທຸລະກິດ ເຂົ້າກັບການສ້າງຈິດສຳນຶກສີຂຽວທາງສັງຄົມ

ນາງ ລັກກີ ຮຸ່ງແສງ, ນັກສຶກສາປີ 3 ໄວ 21 ປີ ຈາກຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ແມ່ນ ນັກສ້າງເນື້ອຫາກ່ຽວກັບຊີວິດການເດີນທາງຂອງນັກສຶກສາ ແລະ ການເຕີບໂຕ. ປັດຈຸບັນອາໄສຢູ່ນະຄອນຫຼວງວຽງຈັນ, ລັກກີ ມີ ຄວາມສົນໃຈໃນການຄົ້ນຄວ້າການບໍລິຫານທຸລະກິດທີ່ເປັນມິດກັບສິ່ງແວດລ້ອມຮ່ວມກັບໝູ່ເພື່ອນມາໂດຍຕະຫຼອດ, ແຕ່ລາວ ຕ້ອງການຮຽນຮູ້ວິທີນຳໃຊ້ສື່ສັງຄົມອອນລາຍໃຫ້ເປັນເຄື່ອງມືທີ່ມີປະສິດທິພາບໃນການສ້າງຄວາມຕື່ນຕົວໃນຍຸກໂລກາພິວັດ.

ການເຂົ້າຮ່ວມໂຄງການ GAMCIL ຖືເປັນປະສົບການໃໝ່ທີ່ທ້າທາຍສຳລັບລັກກີ ເຊິ່ງໄດ້ເປີດໂອກາດໃຫ້ລາວໄດ້ຮຽນຮູ້ຢ່າງ ເລິກເຊິ່ງກ່ຽວກັບສື່ສີຂຽວ, ການລາຍງານຂ່າວ ແລະ ການກວດສອບຂໍ້ມູນດ້ານສິ່ງແວດລ້ອມ. ລາວມີຄວາມມ່ວນຊື່ນກັບກິດຈະກຳ ການວາງແຜນແຄມເປນທີ່ສຸດ ເພາະໄດ້ປະຍຸກໃຊ້ຄວາມຮູ້ດ້ານການຕະຫຼາດທີ່ຕົນຖະນັດ ມາຜະສົມຜະສານກັບບົດຮຽນ ເຮັດໃຫ້ ຫົວຂໍ້ທີ່ເບິ່ງຄືຍາກກາຍເປັນເລື່ອງທີ່ໜ້າສົນໃຈ ແລະ ເຂົ້າເຖິງຄົນໄດ້ງ່າຍ.

"ກ່ອນຈະກົດແຊຣ໌ ຫຼື ແບ່ງປັນຂໍ້ມູນໃດໆກ່ຽວກັບສິ່ງແວດລ້ອມ, ຢາກໃຫ້ທຸກຄົນຢຸດຄິດ ແລະ ກວດສອບຄວາມຖືກຕ້ອງກ່ອນ," ລາວກ່າວເນັ້ນ. "ທຸກຄົນມີອຳນາດໃນການສ້າງສັງຄົມສີຂຽວໄດ້ດ້ວຍປາຍນິ້ວມືຂອງຕົນເອງ."

ຜ່ານການເຮັດວຽກຮ່ວມກັບໝູ່ເພື່ອນຈາກຫຼາກຫຼາຍແຂວງທົ່ວປະເທດ, ກຸ່ມຂອງ ລັກກີ ໄດ້ແບ່ງປັນແນວຄວາມຄິດ ແລະ ສ້າງ ແຄມເປນ "Zero Food Waste" (ການຫຼຸດຜ່ອນຂີ້ເຫຍື້ອອາຫານໃຫ້ເປັນສູນ). ແຄມເປນນີ້ໄດ້ສົ່ງເສີມພຶດຕິກຳທີ່ນຳໄປໃຊ້ໄດ້ ຈິງໃນຊີວິດປະຈຳວັນ ເຊັ່ນ: ການມີສະຕິໃນເວລາເລືອກຊື້ ຫຼື ສັ່ງອາຫານ ແລະ ການກິນອາຫານໃຫ້ໝົດຈານເພື່ອບໍ່ສ້າງຂີ້ເຫຍື້ອ. ການເຮັດວຽກເປັນທີມຍັງຊ່ວຍໃຫ້ລາວໄດ້ຝຶກການຮັບຟັງ, ແລກປ່ຽນມຸມມອງໃໝ່ໆ ແລະ ວາງແຜນຮ່ວມກັນຢ່າງສ້າງສັນ.

ໃນອະນາຄົດ, ລັກກີ ຈະນຳໃຊ້ທັກສະການກວດສອບຄວາມຖືກຕ້ອງຂອງຂໍ້ມູນ ມາລວມເຂົ້າກັບສິລະປະການເລົ່າເລື່ອງ ເພື່ອໃຫ້ ເນື້ອຫາທີ່ຜະລິດມີຄວາມໜ້າເຊື່ອຖື, ຊັດເຈນ ແລະ ເຂົ້າໃຈງ່າຍ. ລາວພາກພູມໃຈທີ່ໄດ້ເປັນຜູ້ນຳຮຸ່ນໃໝ່ ໂດຍຫວັງວ່າຈະເປັນແຮງ ບັນດານໃຈໃຫ້ສັງຄົມເຫັນວ່າ ການປົກປັກຮັກສາສິ່ງແວດລ້ອມບໍ່ແມ່ນເລື່ອງໄກຕົວ, ແຕ່ເລີ່ມຕົ້ນຈາກການປັບປ່ຽນນິດໄສນ້ອຍໆ ໃນແຕ່ລະມື້ເພື່ອກ້າວໄປສູ່ອະນາຄົດທີ່ຍືນຍົງ.

info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ





ນັດທິດາ ທຳມະວົງສາ: ຈາກຄົນຫຼັງກ້ອງ ສູ່ກະບອກສຽງສີຂຽວທີ່ຊົງພະລັງ ເພື່ອການປ່ຽນແປງທີ່ຍືນຍົງ

ນັດທິດາ ທຳມະວົງສາ, ນັກຂ່າວ ແລະ ນັກຕັດຕໍ່ວິດີໂອ ຈາກໜັງສືພິມລາວພັດທະນາ ຄຸ້ນເຄີຍກັບການເຮັດວຽກຢູ່ເບື້ອງຫຼັງໃນຖານະຊ່າງພາບ ແລະ ນັກຕັດຕໍ່. ຕະຫຼອດໄລຍະເວລາທີ່ຜ່ານມາ, ຄວາມທ້າທາຍອັນໃຫຍ່ຫຼວງຂອງລາວຄື ການຂາດເຕັກນິກການເລົ່າເລື່ອງໃຫ້ໜ້າສົນໃຈ ແລະ ຄວາມຮູ້ດ້ານສິ່ງແວດລ້ອມທີ່ຍັງຈຳກັດ ເຊິ່ງເຮັດໃຫ້ຜົນງານທີ່ຜ່ານມາ ຂາດພະລັງໃນການດຶງດູດ ແລະ ບໍ່ສາມາດສື່ສານຜົນກະທົບໄປສູ່ຊຸມຊົນໄດ້ຢ່າງເລິກເຊິ່ງ.

ແຕ່ທຸກຢ່າງໄດ້ປ່ຽນໄປ ເມື່ອລາວໄດ້ກ້າວເຂົ້າມາເປັນສ່ວນໜຶ່ງຂອງໂຄງການ GAMCIL ທີ່ໄດ້ຮັບການສະໜັບສະໜູນຈາກ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ແລະ ສະຫະພາບເອີຣົບ (EU). ໂຄງການນີ້ປຽບເໝືອນແສງສະຫວ່າງທີ່ເປີດໂລກໃໝ່ໃຫ້ກັບນັດທິດາ.

ຜ່ານການລົງທັດສະນະສຶກສາຕົວຈິງທີ່ເມືອງວັງວຽງ, ນັດທິດາ ໄດ້ພົບວ່າ "ການທ່ອງທ່ຽວສີຂຽວ" ບໍ່ແມ່ນພຽງແຕ່ຄຳເວົ້າລອຍໆ ຫຼື ການຮັກສາທຳມະຊາດແບບຜິວເຜີນ. ພາບສະໜາມຂີ້ເຫຍື້ອໃນວັງວຽງ ໄດ້ປຸກຈິດສຳນຶກໃຫ້ລາວເຂົ້າໃຈຢ່າງເລິກເຊິ່ງວ່າ: "ຊຸມຊົນຕ້ອງເປັນເຈົ້າການ". ຖ້າທຸກຄົນຮ່ວມໃຈກັນຄັດແຍກຂີ້ເຫຍື້ອແຕ່ຕົ້ນທາງ, ບັນຫາກໍຈະຖືກແກ້ໄຂຢ່າງແນ່ນອນ.

ສິ່ງທີ່ໜ້າປະທັບໃຈທີ່ສຸດໃນການປ່ຽນແປງຄັ້ງນີ້ຄື ການກ້າວຂ້າມຂີດຈຳກັດຂອງຕົນເອງ. ຈາກຄົນທີ່ບໍ່ເຄີຍຂຽນບົດຄວາມມາກ່ອນ ເພາະເຮັດແຕ່ໜ້າວຽກເຕັກນິກ, ນັດທິດາ ໄດ້ນຳໃຊ້ທັກສະໃໝ່ທີ່ໄດ້ຮຽນຮູ້ ໂດຍສະເພາະການນຳໃຊ້ ເຕັກໂນໂລຊີ AI (ເຊັ່ນ: Gemini) ເຂົ້າມາຊ່ວຍໃນການຄິດໄອເດຍ, ຮ່າງບົດສະຄຣິບ ແລະ ກວດສອບຂໍ້ມູນດ້ານສິ່ງແວດລ້ອມ. ສິ່ງນີ້ຊ່ວຍໃຫ້ລາວສາມາດຜະລິດບົດຄວາມທຳອິດໃນຊີວິດທີ່ມີຊື່ວ່າ: "ການແຍກຂີ້ເຫຍື້ອແຕ່ຕົ້ນທາງ ສູ່ການພັດທະນາແບບຍືນຍົງຕາມທິດສີຂຽວຂອງເມືອງວັງວຽງ" ອອກມາໄດ້ຢ່າງຈົບງາມ ແລະ ມີປະສິດທິພາບ.

ນອກຈາກມຸມມອງດ້ານສິ່ງແວດລ້ອມແລ້ວ, ການຝຶກອົບຮົມຍັງເຮັດໃຫ້ນັດທິດາເຫັນເຖິງຄວາມສຳຄັນຂອງ "ຄວາມສະເໝີພາບທາງເພດ". ລາວເຊື່ອວ່າ ເມື່ອເກີດໄພພິບັດ ຫຼື ການປ່ຽນແປງທາງດິນຟ້າອາກາດ ທຸກຄົນລ້ວນແຕ່ໄດ້ຮັບຜົນກະທົບຢ່າງເທົ່າທຽມກັນ ໂດຍບໍ່ເລືອກເພດ. ດັ່ງນັ້ນ, ໃນຖານະນັກຂ່າວ, ລາວຈຶ່ງໃຫ້ຄຳໝັ້ນສັນຍາວ່າ ຜົນງານນັບຈາກນີ້ໄປ ຈະເປັນພື້ນທີ່ທີ່ມອບສຽງ ແລະ ສະແດງບົດບາດຂອງທຸກເພດໃນການເປັນຜູ້ນຳພາອະນຸລັກສິ່ງແວດລ້ອມຢ່າງເທົ່າທຽມ.

"ການປົກປັກຮັກສາສິ່ງແວດລ້ອມ ບໍ່ແມ່ນໜ້າທີ່ຂອງໃຜຄົນໜຶ່ງ, ແຕ່ມັນເລີ່ມຕົ້ນໄດ້ຈາກຕົວເຮົາເອງໃນທຸກໆມື້," ນັດທິດາ ຝາກຂໍ້ຄິດທີ່ຊົງພະລັງເຖິງຜູ້ຊົມໃຊ້ສື່ທຸກຄົນ.

ໃນອະນາຄົດ, ນັດທິດາ ຕັ້ງເປົ້າໝາຍທີ່ຈະສືບຕໍ່ຜະລິດ "ສື່ສີຂຽວ" ໃຫ້ຫຼາຍຂຶ້ນ ໂດຍນຳໃຊ້ AI ເພື່ອຍົກລະດັບຄຸນນະພາບ ແລະ ພ້ອມທີ່ຈະເປັນຜູ້ສົ່ງຕໍ່ ແບ່ງປັນຄວາມຮູ້ນີ້ໃຫ້ແກ່ເພື່ອນຮ່ວມງານ ເພື່ອສ້າງແຮງຜັກດັນດ້ານສິ່ງແວດລ້ອມໃນສັງຄົມລາວໃຫ້ກວ້າງຂວາງຍິ່ງຂຶ້ນ.

"ຂໍສະແດງຄວາມຂອບໃຈຢ່າງສຸດຊຶ້ງ ຕໍ່ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ແລະ ສະຫະພາບເອີຣົບ ທີ່ເຫັນຄວາມສຳຄັນຂອງສື່ມວນຊົນ. ໂຄງການ GAMCIL ໄດ້ປ່ຽນແນວຄິດ ແລະ ຍົກລະດັບທັກສະຂອງພວກເຮົາຢ່າງແທ້ຈິງ. ຂ້າພະເຈົ້າຫວັງວ່າ ຈະມີໂຄງການດີໆແບບນີ້ອີກ ເພື່ອພັດທະນາສື່ມວນຊົນລາວໃຫ້ກ້າວທັນຍຸກສະໄໝ ແລະ ເປັນກະບອກສຽງເພື່ອສັງຄົມຕໍ່ໄປ."

info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ


ປະຊາຊົນກຳລັງລາຍງານ ແລະ ວາງແຜນຮ່ວມກັນ ໃນການປັບຕົວ ຕໍ່ກັບການປ່ຽນແປງດິນຟ້າອາກາດ.

ແຜນທີ

ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ



ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ,
ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງ ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາ ສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນ ຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການ ເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜຸນຈາກ ໂຄງການ ພັດທະນາສີຂຽວຂອງ ສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜຸນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ -ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການ ພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວ ຂ້ອງກັບຍິດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມ ຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການ ຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດ ຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການ ເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງ ສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານ ທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດ ຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າ ອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ
ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023